

# ບົດທີ 11

# ການຊ່ວຍເຫຼືອເດັກໃຫ້ຮູ້ວ່າເດັກຢູ່ບ່ອນໃດ
# ( ວິທີປະຖົມນິເທດ )

ຣານີ ແມ່ນເດັກນ້ອຍຜູ້ຍິງຕາບອດ ເກີດຢູ່ໃນບ້ານແຫ່ງໜຶ່ງຂອງປະເທດອິນເດຍ, ແມ່ເຖົ້າຂອງ ຣານີ ຊື່ວ່າ ບາກາ ທີ່ເປັນຄົນຕາບອດເໝືອນກັນ ແລະ ໄດ້ຢູ່ພາຍໃຕ້ການເບິ່ງແຍງຂອງ ຢີວານ ແລະ ອາຣູນາ ເຊິ່ງແມ່ນພໍ່ແມ່ຂອງຣານີ ພວກເຂົາໄດ້ສອນ ຣານີ ຕັ້ງແຕ່ລາວອາຍຸໄດ້ 2 ປີ ຣານີ ໄດ້ຮຽນຮູ້ຈັກກັບຄວາມຮູ້ສຶກ ໃນເວລາສຳຜັດກັບກຳແພງເຮືອນ ແລະ ອຸປະກອນຕົກແຕ່ງພາຍໃນເຮືອນ ລາວເຄື່ອນທີ່ຢ່າງລະມັດລະວັງໃນການ ຊອກຫາສຽງ, ຮ່ອງຮອຍຂອງສິ່ງຂອງ ໂດຍການສຳຜັດດ້ວຍນິ້ວມືຂອງລາວ. ປະຈຸບັນ ຄອບຄົວຂອງ ຣານີ ຕ້ອງການສອນໃຫ້ລາວຍ່າງພາຍໃນເຮືອນ ໂດຍປາສະຈາກ ການຈັບສິ່ງຂອງຕ່າງໆ.



ມື້ນີ້, ບາກາ ຈະອະທິບາຍຕໍ່ ຢີວານ ແລະ ອາຣູນາ ວິທີການຮຽນຮູ້ການຍ່າງຈາກສະຖານທີ່ໜຶ່ງ ໄປອີກສະຖານທີ່ໜຶ່ງ "ເມື່ອຂ້ອຍຕ້ອງການຍ່າງໄປປະຕູທາງດ້ານໜ້າ ຫາຕັ່ງທີ່ຂ້ອຍມັກ, ຂ້ອຍຍ່າງແປດກ້າວ ເຊິ່ງຂ້ອຍໄດ້ຜ່ານໂຕະ ແລ້ວຂ້ອຍກໍລ້ຽວຊ້າຍ ແລະ ຂ້ອຍຍ່າງອີກສີ່ກ້າວ ແລ້ວເດ່ແຂນອອກ ກໍໝັ້ນໃຈວ່າ ແປ້ນມ້າຢູ່ທີ່ນັ້ນ ເພາະວ່າ ຂ້ອຍຈື່ໄດ້ ມີບາງຄົນຍ້າຍແປ້ນມ້າ ແລະ ຂ້ອຍນັ່ງຢູ່ບ່ອນທີ່ມີແອ " ບາກາ ຫົວ ເພາະວ່າລາວຈື່ໄດ້.

ແຕ່ວ່າເລື່ອງ ບາກາ ບໍ່ມ່ວນແຕ່ມັນເປັນສິ່ງສຳຄັນສຳລັບພວກເຮົາທີ່ຄວນເຂົ້າໃຈວ່າ ມັນມີຄວາມຫຍຸ້ງຍາກແນວໃດ ສຳລັບເດັກນ້ອຍຕາບອດທີ່ຮຽນຮູ້ກັບສະຖານທີ່ອ້ອມຂ້າງ. ສຳລັບ ຣານີ ທີ່ໄດ້ຮຽນຍ່າງໂດຍປະສະຈາກການຈັບສິ່ງອື່ນ ລາວຈະຕ້ອງຈື່ຈຳຢ່າງລະອຽດ ມີຈັກບາດກ້າວທີ່ຈະຍ່າງ ແລະໄກປານໃດທີ່ຈະລ້ຽວ. ຄອບຄົວຂອງ ຣານີ ຈະຕ້ອງມີຄວາມອົດທົນ ເພາະວ່າມັນຈະເຮັດໃຫ້ ຣານີ ມີກຳລັງໃຈຫຼາຍໃນການຝຶກຕົນເອງ.

## ເດັກຈະຮຽນຮູ້ໄດ້ແນວໃດວ່າເຂົາຢູ່ໃສ

ເດັກຜູ້ທີ່ເບິ່ງເຫັນດ້ວຍຕາ ຈະເຫັນໄດ້ວ່າເຂົາຢູ່ໃສ ແລະ ວັດຖຸຢູ່ບ່ອນໃດ ກົງກັນຂ້າມ ເດັກຜູ້ທີ່ບໍ່ສາມາດເບິ່ງເຫັນດ້ວຍຕາ ກໍ່ຢາກຮູ້ສິ່ງເຫຼົ່ານີ້ເຊັ່ນກັນ. ແຕ່ວ່າລາວຈຳຕ້ອງຮຽນຮູ້ໃຊ້ຄວາມຮູ້ສຶກສຳຜັດຕ່າງໆຂອງລາວ ເມື່ອລາວຮຽນຮູ້ ລາວສາມາດເຄື່ອນທີ່ພາຍໃນເຮືອນ ຕໍ່ມາກໍ່ ກາຍເປັນການຝຶກເຂົ້າສູ່ຊຸມຊົນໄດ້ ດ້ວຍວິທີການຮຽນຮູ້ຄວາມຊິນເຄີຍດ້ວຍຕົວລາວເອງ.

ລາວຈຳຕ້ອງຮຽນຮູ້ວ່າລາວຢູ່ໃສ ເຊິ່ງມີການພົວພັນກັບວັດຖຸຕ່າງໆ




ລາວຕ້ອງຮຽນຮູ້ບ່ອນທີ່ວັດຖຸຢູ່ ເຊິ່ງມີການພົວ ພັນກັບວັດຖຸຕ່າງໆ




ເຈົ້າສາມາດຊ່ວຍເຫຼືອລູກຂອງເຈົ້າຮຽນຮູ້ດ້ວຍວິທີການແນະນຳທີ່ເໝາະສົມ ໂດຍ ( 1 ) ການສອນກ່ຽວກັບທິດທາງ ແລະ ຮ່າງກາຍທີ່ສາມາດເຄື່ອນຍ້າຍໄດ້. ( 2 ) ການຊ່ວຍເຫຼືອທາງດ້ານພັດທະນາຄວາມຮູ້ສຶກຕ່າງໆ ເຊິ່ງໃຫ້ຂໍ້ມູນກ່ຽວກັບບໍລິເວນອ້ອມຂ້າງຕົວຂອງລາວ. (3) ການນຶກຄິດກ່ຽວກັບສິ່ງຕ່າງໆພາຍໃນເຮືອນ ຫຼື ເຮືອນໃກ້ຄຽງເຊິ່ງລາວສາມາດນຳໄປໃຊ້ໃນຂອບເຂດຮົ້ວ.

## ຄວາມຮູ້ສຶກຂອງຮ່າງກາຍ

ເດັກຮຽນຮູ້ຊື່ພາກສ່ວນຂອງຮ່າງກາຍໂດຍການເບິ່ງ ແລະ ຮຽນຮູ້ຈາກຫຸ່ນຫຽມຂອງຄົນ ເດັກທີ່ບໍ່ສາມາດເບິ່ງເຫັນໄດ້ ຈະຕ້ອງຮຽນຮູ້ຊື່ພາກສ່ວນຂອງຮ່າງກາຍແຕກຕ່າງກັນ ເຊິ່ງເຈົ້າສອນເຂົາເຈົ້າດ້ວຍວິທີການສຳຜັດ ຈັບບາຍ ແລະ ການຟັງສຽງ. ສຳລັບກິດຈະກຳຕ່າງໆທີ່ຊ່ວຍໃຫ້ເດັກຜູ້ນ້ອຍຮຽນຮູ້ກ່ຽວກັບພັດທະນາການ ສຳຜັດອິນຊີທັງຫ້າຂອງຮ່າງກາຍ (ແມ່ນເບິ່ງຢູ່ບົດຮຽນທີ 5 ) “ ກິດຈະກຳຕ່າງໆ ສຳລັບເດັກນ້ອຍ “ ມີຫຼາຍກິດຈະກຳຕ່າງໆ ທີ່ເໝາະສົມເປັນຢ່າງດີ ສຳລັບເດັກໃຫຍ່.

### ການຊ່ວຍເຫຼືອເດັກນ້ອຍຮຽນຮູ້ຊື່ຂອງພາກສ່ວນຕ່າງໆຂອງຮ່າງກາຍ

ສ້າງເກມຕ່າງໆຂຶ້ນເພື່ອຖາມເດັກດ້ວຍການເຮັດສິ່ງຕ່າງໆກັບພາກສ່ວນຕ່າງໆຂອງຮ່າງກາຍລາວ ແລະ ກັບພາກສ່ວນຮ່າງກາຍຂອງເຈົ້າ ນີ້ແມ່ນການແນະນຳ 2, 3 ຕົວຢ່າງສຳລັບເຈົ້າ ເຊັ່ນ:

ບອກລູກຂອງເຈົ້າຈັບພາກສ່ວນຮ່າງກາຍຂອງລາວ ແລະ ຕໍ່ຈາກນັ້ນ ໃຫ້ຈັບພາກສ່ວນຮ່າງກາຍຂອງເຈົ້າເໝືອນກັນ.



ບອກໃຫ້ເດັກຂອງເຈົ້ານອນກົ້ງຢູ່ພື້ນ ແລ້ວຖາມຊື່ພາກສ່ວນຕ່າງໆຂອງຮ່າງກາຍທີ່ສຳຜັດກັບພື້ນ. ນີ້ແມ່ນເປັນເກມສຳລັບຫຼິ້ນເປັນກຸ່ມໄດ້ດີ.







ເອົາຜ້າກັ້ງວອ້ອມພາກສ່ວນຕ່າງໆຂອງເດັກ ແລ້ວບອກໃຫ້ເດັກນາຍອອກ. ອະທິບາຍຊື່ພາກສ່ວນຕ່າງໆຂອງຮ່າງກາຍທີ່ຜ້າກັ້ງວ




ເຮັດໃຫ້ເດັກກົ້ມຫົວ, ກ້າວ ແລະ ເຄື່ອນໄຫວ ແລ້ວບອກຊື່ພາກສ່ວນຕ່າງໆ ທີ່ລາວໃຊ້.

## ການຊ່ວຍເຫລືອລູກຂອງທ່ານໃຫ້ຮຽນຮູ້ກ່ຽວກັບການພົວພັນລະຫ່ວາງຮ່າງກາຍຂອງລາວກັບວັດຖຸຕ່າງໆ.

ລູກຂອງເຈົ້າຕ້ອງການຮຽນຮູ້ແນວຄວາມຄິດຄື: “ ຢູ່ທາງໜ້າ “ ແລະ “ ຢູ່ທາງເບື້ອງຊ້າຍ ເພື່ອຢາກບອກໃຫ້ຮູ້ວ່າສິ່ງຂອງຕ່າງໆຢູ່ບ່ອນໃດ. ນີ້ຄືວິທີການໜຶ່ງທີ່ຈະຊ່ວຍໃຫ້ເດັກໄດ້ຮຽນຮູ້. ພະຍາຍາມໃຫ້ການເອົາໃຈໃສ່ເດັກເປັນພິເສດກ່ຽວກັບເຄື່ອງຫຼິ້ນຂອງເດັກທີ່ມີສຽງ. ບອກເດັກວ່າເຄື່ອງຫຼິ້ນຢູ່ທາງໜ້າ, ທາງຫຼັງ, ຫຼື ທາງຂວາມື ແລະ ທາງຊ້າຍມື. ແລ້ວຍ້າຍເຄື່ອງຫຼິ້ນ, ບອກເດັກວ່າເຄື່ອງຫຼິ້ນຢູ່ໃສ, ແລ້ວສັງເກດເບິ່ງວ່າລາວສາມາດຊອກເຄື່ອງຫຼິ້ນດ້ວຍຕົວເອງໄດ້ ຫຼື ບໍ່?




**ຖ້າຫາກວ່າລາວມີຄວາມຫຍຸ້ງຍາກໃນການຮຽນຮູ້ຈາກເບື້ອງຂວາຫາເບື້ອງຊ້າຍ, ມັດແພບາງໆ ຫຼື ໃສ່ກ້ອງແຂນຂໍ່ມືລາວ.**




ຫຼັງຈາກທີ່ລາວສາມາດບອກໄດ້ພາກສ່ວນຮ່າງກາຍທີ່ຢູ່ທາງເບື້ອງຂວາຂອງລາວໄປຫາພາກສວນຮ່າງກາຍທີ່ຢູ່ທາງເບື້ອງຊ້າຍ, ໃຫ້ແຂນຂອງລາວຖືວັດຖຸທີ່ແຕກຕ່າງກັນ ແລ້ວບອກໃຫ້ລາວວາງວັດຖຸນັ້ນລົງໄວ້ເບື້ອງໃດເບື້ອງໜຶ່ງ ຫຼື ທັງສອງເບື້ອງເຮັດໃຫ້ເກັບຍາກຂຶ້ນເທື່ອລະກ້າວ.




ສ້າງເກມເຊິ່ງໃຫ້ລາວຢູ່ກ້ອງ ສິ່ງຂອງຕ່າງໆ ( ໂຕະ ຫຼືຕຽງ) ຢູ່ເທິງສິ່ງຕ່າງໆ (ຕຽງ) ຢູ່ລະຫວ່າງກາງ ຫຼື ຢູ່ອ້ອມຂ້າງສິ່ງຕ່າງໆ (ໂຕະ ຫຼື ຕັ່ງແປ້ນມ້າ), ຜ່ານສິ່ງຕ່າງໆ (ປະຕູ ) ແລະ ຢູ່ຂ້າງສິ່ງຕ່າງໆ (ກັບໃຫຍ່) ອະທິບາຍການເຄື່ອນທີ່ແຕ່ລະສິ່ງນັ້ນແມ່ນແນວໃດ.




ສ້າງເກມທີ່ແຕກຕ່າງກັນ ເຊິ່ງວ່າລາວຈຳຕ້ອງໄດ້ເຄື່ອນຍ້າຍຮ່າງກາຍໄປທາງໜ້າ, ທາງຫຼັງ ຫຼື ທາງຂ້າງ ຕາມການສັ່ງ, ເພື່ອຊອກຫາເຄື່ອງຫຼິ້ນ, ອະທິບາຍແຕ່ລະຢ່າງວ່າມັນມີການເຄື່ອນໄຫວແນວໃດ. ຖ້າເຈົ້າສ້າງເກມຮ້ອງເພງ ເຊິ່ງວ່າຊື່ຂອງເກມນັ້ນກ່ຽວກັບການເຄື່ອນທີ່ແນວໃດທີ່ຈະເຮັດໃຫ້ລາວຈື່ໄດ້ດີແຕ່ລະຢ່າງ.

## ດ້ານສາຍຕາ

ເດັກນ້ອຍເຊິ່ງຜູ້ທີ່ສາມາດເບິ່ງເຫັນໄດ້ໜ້ອຍໜຶ່ງ, ສາມາດນຳໃຊ້ສາຍຕາຂອງພວກເຂົາເຈົ້າຊ່ວຍເຫຼືອຕົວເອງໄດ້. ໂດຍສະເພາະແລ້ວ ຖ້າຫາກວ່າເຈົ້າໃຫ້ຄວາມຊ່ວຍເຫຼືອພວກເຂົາ.

ຖ້າຫາກວ່າເດັກນ້ອຍສາມາດເຫັນແສງໃຫ້ທິດທາງຕ່າງໆໂດຍການໃຫ້ແສງເປັນຈຸດເລີ່ມຕົ້ນ.







ຖ້າຫາກລູກຂອງເຈົ້າຫາກສາມາດເຫັນດອກໄຟ. ຍ້າຍດອກໄຟໄປໄວ້ເທິງ ເພື່ອໃຫ້ລາວຝຶກຕົວລາວເອງເມື່ອລາວເຂົ້າໄປໃນຫ້ອງ.



ວາງດອກໄຟໄວ້ບ່ອນທີ່ສູງຈາກພື້ນ ຫຼື ວາງໄວ້ບ່ອນທີ່ຖັດຈາກບາງສິ່ງບາງຢ່າງ. ເດັກຈຳຕ້ອງຈື່ ເພື່ອຮັບປະກັນການເຄື່ອນໄຫວທີ່ປອດໄພ.




ຖ້າຫາກລູກເຈົ້າສາມາດເຫັນ ຂອງສີທີ່ສົດໃສ, ວາງສີທີ່ແຕກຕ່າງກັນຂອງເສື້ອຜ້າ, ເທັບ, ສິ່ງ ຫຼື ອຸປະກອນຕ່າງໆ ໄວ້ເທິງປະຕູ ແລະ ສະຖານທີ່ຂ້າງນອກຕ່າງໆ ທີ່ແຕກຕ່າງກັນ. ເມື່ອລາວເຫັນສີ ລາວຈະຮູ້ໄດ້ວ່າລາວຢູ່ໃສ.

# ການໄດ້ຍິນ.

ການໄດ້ຍິນສຽງແມ່ນເປັນສິ່ງທີ່ສຳຄັນ ໂດຍສະເພາະເດັກນ້ອຍຜູ້ທີ່ບໍ່ສາມາດເຫັນໄດ້ດີ, ເພາະວ່າ ມັນໃຫ້ຂໍ້ມູນແກ່ເຂົາເຈົ້າກ່ຽວກັບສິ່ງຕ່າງໆ ທີ່ບໍ່ຢູ່ໃກ້. ສຽງຕ່າງໆໄດ້ຊ່ວຍໃຫ້ເດັກນ້ອຍຕາບອດຮູ້ວ່າ ບາງສິ່ງບາງຢ່າງແມ່ນຫຍັງ? ມັນຢູ່ໃສ ແລະ ມັນໄກເທົ່າໃດ? ຕາມປົກກະຕິເຮົາສາມາດນຳເອົາເດັກນ້ອຍໃຫ້ຢູ່ໃກ້ພຽງພໍທີ່ຈະຈັບເອົາວັດຖຸ ເຊິ່ງເຮັດໃຫ້ມີສຽງດັງ.

## ➢ ການຊ່ວຍເຫຼືອໃຫ້ເດັກເຂົ້າໃຈລັກສະນະ ແລະ ທີ່ມາຂອງສຽງ.

ຫຼິ້ນເກມທີ່ລູກຂອງເຈົ້າຮູ້ຊື່ຂອງສຽງຕ່າງໆນັ້ນ ທຸກໆມື້ ຢູ່ທີ່ບ້ານ ຫຼື ຢູ່ທີ່ຊຸມຊົນ ຄື: ສຽງການອັດປະຕູ, ສຽງຍໍຕັ່ງລົງສູ່ພື້ນ, ຫຼື ສຽງຈັກເລື່ອຍໄມ້.




ຫຼິ້ນເກມທວາຍໃຫ້ເດັກຮູ້ກ່ຽວກັບສະມາຊິກໃນຄອບຄົວ ແລະ ສັດອື່ນໆ, ໂດຍການນຳໃຊ້ສຽງປົກກະຕິຂອງເຂົາເຈົ້າ.




ປົກກະຕິແລ້ວເຈົ້າສາມາດບອກໃຫ້ເດັກເຄື່ອນທີ່ໄປທາງໜ້າເພື່ອຫາສຽງ.



ລູກຂອງເຈົ້າໄດ້ຟັງສຽງບາດກ້າວຕີນ ທີ່ ເຈົ້າຍ່າງໄປທາງໜ້າຂອງລາວ ແລະ ຫ່າງໄກອອກໄປຈາກລາວ. ເບິ່ງວ່າລາວຈະສາມາດບອກວ່າ ເຈົ້າຍ່າງອອກໄປໄກບໍ່ ຫຼືວ່າ ຕົບມື ເມື່ອເຈົ້າຫຍັບອອກໄກລາວ ແລ້ວຄ່ອຍໆໄກອອກໄປ, ແລ້ວເຈົ້າຢຸດຖາມລາວ ເພື່ອໃຫ້ລາວຊອກຫາເຈົ້າ.




ສອນລູກຂອງເຈົ້າໃຫ້ຟັງສຽງບາດຕີນຂອງລາວວ່າ ມັນມີການປ່ຽນແປງຄືແນວໃດ, ເມື່ອລາວຢູ່ໃກ້ເຮືອນ ຫຼື ໃກ້ຝາເຮືອນ ແລະ ເມື່ອຢູ່ບ່ອນກາງແຈ້ງ ການຝຶກແບບນີ້ ລາວຈະສາມາດຮຽນຮູ້ບອກໄດ້ວ່າ ສິ່ງອື່ນໆຢູ່ໃກ້ສ່ຳໃດ ໂດຍການຟັງສຽງຕ່າງໆ. ວິທີການນີ້ຈະ ຊ່ວຍຕົວລາວ ເມື່ອລາວຍ່າງດ້ວຍຕົວລາວເອງໃນທີ່ຊຸມຊົນ.






## ການສຳຜັດ ແລະ ຄວາມຮູ້ສຶກ

ການທີ່ຮູ້ວ່າລາວຢູ່ໃສ, ລູກຂອງເຈົ້າຍັງຕ້ອງການຮຽນຮູ້ ແລະ ຈົດຈຳຮູບຮ່າງ, ນ້ຳໜັກ ແລະ ລັກສະນະຂອງວັດຖຸອ້ອມຕົວລາວ. ລາວມີຄວາມຕັ້ງໃຈທີ່ຈະຮຽນຮູ້ຄວາມຮູ້ສຶກຕໍ່ພື້ນທີ່ຢູ່ລຸ່ມຕີນຂອງລາວ ແລະ ທິດທາງຂອງອຸນຫະພູມທີ່ສາມາດປ່ຽນແປງເມື່ອລາວເຄື່ອນທີ່ຈາກບ່ອນໜຶ່ງໄປຍັງອີກບ່ອນໜຶ່ງ.

### ➢ ການຊ່ວຍເຫຼືອເດັກນ້ອຍເພື່ອພັດທະນາການສຳຜັດຂອງອິນຊີທັງ 5

ຕະຫຼອດທັງວັນ ການສົ່ງເສີມໃຫ້ເດັກສຳຜັດວັດຖຸທີ່ແຕກຕ່າງກັນດ້ານຂະໜາດ, ນ້ຳໜັກ ແລະ ລັກສະນະຂອງວັດຖຸ. ຖາມໃຫ້ເດັກອະທິບາຍຄວາມຮູ້ສຶກຂອງຕົນ ຕໍ່ມາເຈົ້າສາມາດໃຫ້ເດັກສຳຜັດກັບສະຖານທີ່ທີ່ມີວັດຖຸແຕກຕ່າງກັນ ແລະ ມີລັກສະນະທີ່ຢູ່ອ້ອມຂ້າງເຮືອນເພື່ອຊ່ວຍໃຫ້ເດັກຮູ້ວ່າເຂົາຢູ່ໃສ.




ສົ່ງເສີມໃຫ້ເດັກຍ່າງປະຕີນເທິງພື້ນຊະນິດຕ່າງໆທີ່ແຕກຕ່າງກັນ. ຕົວຢ່າງ: ຂີ້ຕົມ, ຫຍ້າ ແລະ ທາງປູຢາງ. ເພາະວ່າເດັກສາມາດຮຽນຮູ້ຈາກຄວາມຮູ້ສຶກຕໍ່ສິ່ງດັ່ງກ່າວ. ຖ້າວ່າລາວໃສ່ເກີບລາວສາມາດປົດອອກໄດ້ ແລະ ສັງເກດເບິ່ງວ່າຄວາມຮູ້ສຶກຂອງທັງສອງພື້ນທີ່ນັ້ນວ່າ ມັນແຕກຕ່າງກັນແນວໃດ. ເມື່ອລາວຍ່າງອອກໄປທາງຂ້າງນອກ ຂໍ້ມູນທີ່ລາວສາມາດສຳຜັດຈະຊ່ວຍໃຫ້ລາວຮູ້ວ່າລາວກຳລັງຢູ່ໃສ ຫຼື ຊ່ວຍໃຫ້ລາວຮູ້ວ່າສຶກໃນເວລາທີ່ຍ່າງຕາມທາງ.





ສອນລູກນ້ອຍຂອງເຈົ້າໃຫ້ຮູ້ວິທີໃຊ້ຕີນຂອງ ລາວ ທີ່ມີຄວາມຮູ້ສຶກແຕກຕ່າງໃນຄວາມສູງ ຄື: ຂອບທາງ ຫຼື ແຄມທາງ.

ສົ່ງເສີມໃຫ້ລູກຂອງເຈົ້າສັງເກດເມື່ອການປ່ຽນແປງຂອງອຸນຫະພູມ ເມື່ອລາວເຄື່ອນທີ່ຈາກ ສະຖານທີ່ໜຶ່ງໄປຍັງອີກສະຖານທີ່ອື່ນ.



**ເມື່ອອາລີ ຮູ້ສຶກວ່າອາກາດເຢັນ ລາວຮູ້ສຶກວ່າລາວພວມຈະຮອດ ປະຕູເຮືອນຂອງລາວ**



**ຄາຣາ ຮູ້ສຶກວ່າຕາເວັນໄດ້ສ່ອງໃສ່ ຫຼັງຂອງລາວ, ເມື່ອລາວກັບຈາກ ຕະຫຼາດມາເຮືອນໃນຕອນທ່ຽງ.**

## ການດົມກິ່ນ

ກິ່ນ, ຄ້າຍຄືສຽງ ສາມາດໃຫ້ຂໍ້ມູນກ່ຽວກັບສິ່ງຕ່າງໆ ທີ່ຢູ່ໄລຍະໃກ້ ແລະ ໄກ ເພື່ອເຂົ້າໃຈວິທີການນຳໃຊ້ກິ່ນ ແລະ ກິ່ນເຫຼົ່ານັ້ນມາຈາກໃສ, ເຈົ້າສາມາດນຳໃຊ້ພາລະກິດຂອງເຈົ້າທຸກໆວັນ ເພື່ອຊ່ວຍໃຫ້ລູກຂອງເຈົ້າຮຽນຮູ້ກ່ຽວກັບກິ່ນຕ່າງໆໃນຊຸມຊົນ.

## ການຊ່ວຍພັດທະນາຄວາມຮູ້ສຶກຂອງເດັກໃນການດົມກິ່ນ

ເມື່ອເຈົ້າຍ່າງອອກໄປຂ້າງນອກ ເຈົ້າຄວນອະທິບາຍກ່ຽວກັບຄວາມແຕກຕ່າງຂອງກິ່ນທີ່ຢູ່ອ້ອມຕົວເຈົ້າ ຕົວຢ່າງ: ກິ່ນທີ່ມາຈາກອາຫານ, ດອກໄມ້, ສັດ, ສິ່ງເສດເຫຼືອ. ຖ້າເປັນໄປໄດ້ຄວນນຳເດັກເຂົ້າໃກ້ ເພື່ອດົມ ຈັບສິ່ງດັ່ງກ່າວນັ້ນທີ່ລາວໄດ້ກິ່ນ.




**ເທື່ອໜ້າເຈົ້າຍ່າງໄປພ້ອມລາວ, ເບິ່ງວ່າລາວຈະສາມາດຮູ້ຊື່ກິ່ນທີ່ລາວດົມດ້ວຍຕົວລາວເອງໄດ້ ຫຼື ບໍ່?**




**... ແລະ ບອກລາວໃຫ້ຍ່າງໄປທາງໜ້າ ເພື່ອຊອກຫາກິ່ນ ຫຼື ທາງທີ່ຈະໄປຫາກິ່ນນັ້ນ**




ມື້ຕໍ່ມາຊີ້ໃສ່ເຄື່ອງມືໃນເຮືອນ ແລະ ອາຫານທີ່ມີຄວາມແຕກຕ່າງກັນ ເຊິ່ງມີກິ່ນແຮງ. ເບິ່ງວ່າລູກຂອງເຈົ້າມີຄວາມສາມາດຈື່ຈຳສິ່ງເຫຼົ່ານັ້ນໄດ້ ຫຼື ບໍ່?.

## ວິທີການປະຖົມນິເທດອື່ນໆ

ເພື່ອການກາຍເປັນອິດສະຫຼະ, ເດັກນ້ອຍຕ້ອງການຮຽນຮູ້ຫຼາຍຢ່າງໃນສະຖານທີ່ຕ່າງໆ ແລະ ຕາມທິດທາງໃໝ່ໆ. ກິດຈະກຳຕ່າງໆນີ້ ແມ່ນມີຄວາມຫຍຸ້ງຍາກສຳລັບລູກຂອງເຈົ້າ ທີ່ຈະຮຽນຮູ້ ແລະ ອາດຈະເຮັດໃຫ້ຢ້ານກົວໃນເວລາທຳອິດ. ມັນອາດຈະມີຄວາມຫຍຸ້ງຍາກສຳລັບເຈົ້າທີ່ຈະໃຫ້ທິດທາງ ເພື່ອທີ່ລາວຈະສາມາດປະຕິບັດຕາມ, ເຈົ້າສາມາດທີ່ຈະເປັນຄູທີ່ດີກວ່າສຳລັບລູກຂອງເຈົ້າຖ້າວ່າ:

- ທຳອິດພະຍາຍາມເຮັດກິດຈະກຳກັບຜູ້ໃຫຍ່ຄົນອື່ນໆ, ເອົາແພມັດຕາແຕ່ລະຄົນ ແລະ ຝຶກຫັດທັງໝົດບາດກ້າວຕ່າງໆ ໂດຍເວົ້າກ່ຽວກັບວິທີໃດທີ່ເຈົ້າສາມາດໃຫ້ຄຳແນະນຳທີ່ສາມາດເຂົ້າໃຈ
- ຕໍ່ຈາກນັ້ນ ໃຫ້ພະຍາຍາມສອນເດັກຜູ້ທີ່ສາມາດເຫັນ. ມັດຕາເດັກ ແລ້ວນຳພາລາວເຮັດທຸກບາດກ້າວຄ້າຍຄືກັນກັບເຈົ້າ ທົດລອງເຮັດກັບຜູ້ໃຫຍ່. ເອົາໃຈໃສ່ຢ່າງໃກ້ຊິດ ເພື່ອເບິ່ງຜົນການກະທຳຂອງລາວ. ສະນັ້ນ ເຈົ້າສາມາດຫາວິທີທາງເພື່ອເຮັດໃຫ້ລາວມີຄວາມກັງວົນໜ້ອຍລົງ ແລະ ທັງເປັນການສົ່ງເສີມລາວ.

## ການຊ່ວຍເຫຼືອລູກຂອງເຈົ້າໃຫ້ປະຕິບັດຕາມທິດທາງຕ່າງໆ.

ລູກຂອງເຈົ້າຍ່າງໄດ້ຢ່າງສະດວກສະບາຍດ້ວຍຕົວລາວເອງ, ສອນໃຫ້ລາວຮູ້ວິທີລ້ຽວ.

**ເອົາຫຼັງຂອງລາວຕິດຝາ ແລ້ວບອກໃຫ້ລາວລ້ຽວໄປອີກຂ້າງໜຶ່ງຈົນກະທັ້ງ.....**



**ເອົາບ່າເບື້ອງໜຶ່ງແປະຝາ (1/4 ຮອບ**



ລາວຫັນໜ້າເຂົ້າຝາ (ເຄິ່ງຮອບ)....



ລາວຫັນໜ້າອອກໃຫ້ບ່າກົງກັນຂ້າມກັບຝາ (3/4 ຮອບ)



ລາວກຳລັງຫັນໄປທາງໜ້າອີກຄັ້ງ (ລ້ຽວກັບຄືນໄປໃນທ່າເກົ່າ



ຊຸກຍູ້ໃຫ້ລາວຕັ້ງໃຈເຄື່ອນຍ້າຍຝີກຕີນລາວຄືດັ່ງລາວເຮັດ. ລາວສາມາດເຄື່ອນຍ້າຍຊ້ຳໆຈາກຝາ ແລະ ຝຶກຊ້ອມດ້ວຍຕົວລາວເອງ ພະຍາຍາມຈື່ໄວ້ວ່າ ລູກຂອງທ່ານຈະມີຄວາມຕ້ອງການຝຶກຫຼາຍກວ່າເກົ່າ ກ່ອນທີ່ລາວຈະສາມາດໝູນໄດ້ດ້ວຍຕົວລາວເອງ.

## ການຊ່ວຍເຫລືອລູກນ້ອຍຂອງເຈົ້າຮຽນຮູ້ເພື່ອຍ່າງໄປສະຖານທີ່ໃຫມ່

ກິດຈະກຳເຫລົ່ານີ້ຈະຊ່ວຍໃຫ້ລູກຂອງເຈົ້າຮຽນຮູ້ກ່ຽວກັບ:

- ຫມາຍເຂດແດນແຕ່ລະສິ່ງ (ວັດຖຸ, ສຽງ ຫລື ກິ່ນເຊິ່ງແມ່ນສະຖານທີ່ປົກກະຕິທີ່ເຫມືອນກັນ)
- ຮ່ອງຮອຍທຸກໆ ວັດຖຸ, ທຸກໆສຽງ ແລະ ທຸກໆກິ່ນ. ເຊິ່ງມີການໃຫ້ຂໍ້ມູນທີ່ດີ ແຕ່ວ່າປົກກະຕິ ແລ້ວບໍ່ແມ່ນສະຖານທີ່ເໝືອນກັນ.

ກິດຈະກຳເຫຼົ່ານີ້ຄວນເຮັດຕາມລຳດັບ ເຊິ່ງໄດ້ອະທິບາຍດັ່ງລຸ່ມນີ້:




1. ທຳອິດຫຼິ້ນເກມກັບສະຖານທີ່ລູກເຈົ້າຮູ້ດີ ບອກລາວວ່າເຈົ້າເອົາບາງສິ່ງບາງຢ່າງວາງຕັນທາງລາວຍ່າງ ແລະ ເບິ່ງວ່າລາວຈະສາມາດຜ່ານມັນໂດຍປະສະຈາກການສະດຸດ ຫຼື ການລົ້ມ.ອັນນີ້ຈະຊ່ວຍໃຫ້ລາວຮູ້ສຶກໝັ້ນໃຈຂຶ້ນຕື່ມກ່ຽວກັບຄວາມພະຍາຍາມ ເພື່ອຍ່າງອອກໄປສະຖານທີ່ໃໝ່.

2. ແລ້ວໃຫ້ລາວຈັບນິ້ວມືຂອງເຈົ້າເບື້ອງໜຶ່ງ ແລະ ຍ່າງຕາມຫຼັງຂອງເຈົ້າ ເພື່ອຜ່ານໄປສະຖານທີ່ໃໝ່.






3. ເມື່ອເຈົ້າຍ່າງ ຊ່ວຍໃຫ້ລາວຈື່ຈຳ ຮ່ອງຮອຍ ແລະ ເຂດແດນ ແນ່ນອນວ່າມັນໄດ້ສອນໃຫ້ລາວຮູ້ກ່ຽວກັບຄວາມອັນຕະລາຍຂອງສິ່ງກີດຂວາງຫຼາຍບ່ອນຄື: ແມ່ນນ້ຳ ຫຼື ຫີນທາງ.




4. ເມື່ອລາວຮູ້ສຶກສະດວກສະບາຍກັບສະຖານທີ່ນັ້ນແລ້ວ, ໃຫ້ລາວຍ່າງຜ່ານສະຖານທີ່ນັ້ນອີກເທື່ອໜຶ່ງ. ຄັ້ງນີ້ທັນກັບຍ່າງຖອຍຫຼັງຢູ່ທາງໜ້າລາວ ແລະ ເຈົ້າກັບລາວຈະກົງກັນຂ້າມໃນຂະນະທີ່ເຈົ້າຍ່າງ.

5. ສຸດທ້າຍ, ຍ່າງຕາມຫຼັງລາວໃນຂະນະທີ່ລາວບັນຍາຍວ່າມີຫຍັງທີ່ຢູ່ອ້ອມຕົວລາວ.

**ອິດທົນໃຊ້ເວລາສົມຄວນສຳລັບເດັກ ເພື່ອການຮູ້ສຶກສະດວກສະບາຍໃນການຍ່າງດ້ວຍຕົວ ເອງຢູ່ສະຖານທີ່ໃໝ່.**




6. ເມື່ອລູກນ້ອຍຂອງເຈົ້າມີຄວາມໝັ້ນໃຈ ໃຫ້ລາວເລີ່ມຮູ້ຈຸດທີ່ມີສິ່ງກີດຂວາງ ແລະ ອະທິບາຍບ່ອນທີ່ຈະໄປຈາກສະຖານທີ່ນັ້ນ ທຳອິດເຮັດສິ່ງນີ້ໃນໄລຍະທາງທີ່ສັ້ນໆ, ແລ້ວຈຶ່ງຄ່ອຍໆເພີ່ມໄລຍະທາງໄກອອກ.



## ຊຸມຊົນສາມາດຊ່ວຍດ້ວຍວິທີໃດ.

ຄົນທີ່ຢູ່ໃນຊຸມຊົນສາມາດຊ່ວຍເຫຼືອໃຫ້ມັນງ່າຍຂຶ້ນສຳລັບລູກຂອງເຈົ້າໃນການຊອກຫາເສັ້ນທາງຂອງລາວ.

ສະມະຊິກຢູ່ໃນຊຸມຊົນສາມາດຮຽນຮູ້ໃນການໃຫ້ທິດທາງ ເຊິ່ງຈະຊ່ວຍໃຫ້ລາວຄົ້ນພົບສິ່ງຕ່າງໆດ້ວຍຕົວລາວເອງ. ບົດທີ 13 ເວົ້າກ່ຽວກັບການຊ່ວຍເຫຼືອແບບພິເສດຂອງສະມາຊິກຢູ່ໃນຊຸມຊົນທີ່ສາມາດຊ່ວຍເຫຼືອເດັກທີ່ບໍ່ສາມາດເບິ່ງເຫັນໄດ້ດີ.

ຜູ້ຄົນສາມາດວາງເຂດແດນໝາຍຕາມສະຖານທີ່ຕ່າງໆ ເຊິ່ງຈະຊ່ວຍໃຫ້ລູກຂອງທ່ານຊອກເສັ້ນທາງ ຫຼື ຮູ້ເສັ້ນທາງບ່ອນທີ່ຈະລ້ຽວ ແຕ່ລະບ້ານ ຫຼື ເພື່ອນບ້ານແມ່ນແຕກຕ່າງກັນ, ສະນັ້ນ ເຈົ້າ ແລະ ຊຸມຊົນຂອງເຈົ້າຈະຕ້ອງອອກແບບສິ່ງທີ່ເໝາະສົມສຳລັບລູກຂອງເຈົ້າ. ນີ້ຄື 2 ຕົວຢ່າງສຳລັບການໝາຍເຂດແດນ ເຊິ່ງສາມາດເປັນໂຄງການຂອງຊຸມຊົນ ເພື່ອຊ່ວຍໃຫ້ເດັກທີ່ບໍ່ສາມາດເບິ່ງເຫັນໄດ້ດີ:



**ການວາງຫຼັກ ຫຼື ເຄື່ອງໝາຍຕ່າງໆ ບ່ອນທີ່ເປັນທາງຂ້າມສາມາດຊ່ວຍໃຫ້ເດັກຊອກເສັ້ນທາງດ້ວຍຕົວຂອງລາວເອງ**



**ການມັດເຊືອກເພື່ອນຳທາງ ຫຼື ເຊືອກກັ້ນທີ່ສາມາດຊ່ວຍໃຫ້ເດັກຊອກເສັ້ນທາງດ້ວຍຕົວເຂົາເອງ.**